


# ມືຖືສາກ ປາກຖືສິນ

## ຄົນບາບຜູ້ທຳອິດ

**ຄວາມບາບເລີ່ມຕົ້ນມາຈາກໃຜ?**

"ຜູ້ທີ່ເຮັດບາບຕາມເຄີຍກໍມາຈາກມານ ເພາະວ່າມານໄດ້ເຮັດບາບຕັ້ງແຕ່ຕົ້ນເດີມມາ ພຣະບຸດຂອງພຣະເຈົ້າໄດ້ສະເດັດມາປາກົດກໍເພາະເຫດນີ້ແຫລະ ຄືເພື່ອຊົງທຳລາຍກິຈການຂອງມານເສັຽ" (1 ໂຢຮັນ 3:8)

**ໝາຍເຫດ**: ຖ້າຫາກບໍ່ມີພຣະຄຳພີ ຄຳກ່ຽວກັບການກຳເນີດຂອງໂລກກໍຄົງບໍ່ມີຄຳຕອບ

**ມານໄດ້ເລີ່ມຕົ້ນເປັນອາດຊະຍາກອນນັບຕັ້ງແຕ່ເວລາໃດມາ?**

"ທ່ານທັງຫລາຍມາຈາກພໍ່ຂອງທ່ານຄືມານ ພວກທ່ານມີໃຈຢາກເຮັດຕາມຄວາມປາຖນາຂອງພໍ່ທ່ານ ມັນເປັນຜູ້ຂ້າຄົນຕັ້ງແຕ່ເດີມມາແລ້ວ ແລະບໍ່ໄດ້ຕັ້ງຢູ່ໃນຄວາມຈິງ ..." (ໂຢຮັນ 8:44)

**ໝາຍເຫດ**: ພຣະຄຳພີພາສາອັງກິດໄດ້ໃຊ້ຄຳວ່າ "ເລີ່ມຕົ້ນ(beginning)" ເຊິ່ງພາສາລາວໃຊ້ຄຳວ່າ "ເດີມ"

**ມານມີຄວາມສຳພັນຫຍັງກັບການຕົວະ?**

"...ເພາະໃນຕົວມັນ(ມານ)ບໍ່ມີຄວາມຈິງ ເມື່ອມັນເວົ້າຕົວະມັນກໍເວົ້າຕາມສັນດານຂອງມັນເອງ ເພາະ(ມານ)ເປັນຜູ້ຕົວະແລະເປັນພໍ່ຂອງການຕົວະ" (ໂຢຮັນ 8:44)

**ມານໄດ້ຖືກສ້າງມາພ້ອມກັບຄວາມບາບບໍ?**

"ເຈົ້າກໍປາສຈາກຕຳໜິໃນວິທີການທັງຫລາຍຂອງເຈົ້າ ຕັ້ງແຕ່ວັນທີ່ເຈົ້າໄດ້ຖືກສ້າງຂຶ້ນມາຈົນພົບຄວາມບາບຊົ່ວໃນຕົວເຈົ້າ" (ເອເຊກຽນ 28:15)

**ໝາຍເຫດ**: ໃນທີ່ນີ້ເອເຊກຽນໄດ້ເວົ້າເຖິງມານຊານຕານພາບໄຕ້ຮູບຮ່າງຂອງ"ກະສັດເມືອງຕີເຣ" (ເບິ່ງເອເຊກຽນ 28:12) ພຣະຄຳພີຂໍ້ນີ້ ແລະ ໂຢຮັນ 8:44 ທີ່ວ່າ ຜູ້ທີ່"ບໍ່ໄດ້ຕັ້ງຢູ່ໃນຄວາມຈິງ" ໄດ້ສະແດງໃຫ້ເຫັນວ່າມານຊາຕານເຄີຍເປັນຜູ້ທີ່ດີເລີດປະເສີດ ແລະຕັ້ງຢູ່ໃນຄວາມຈິງ ເປໂຕໄດ້ເວົ້າວ່າຊາມານແມ່ນ"ເທວະດາທີ່ເຮັດບາບ" (2 ເປໂຕ 2:4) ແລະຢູດາໄດ້ເວົ້າ

ວ່າມານແມ່ນເທວະດາທີ່“ບໍ່ພໍໃຈຮັກສາອຳນາດອະທິປະໄຕທີ່ຊົງປະທານແກ່ຕົນ” (ຢູດາ 1:6) ເທວະດາເຫລົ່ານີ້ ຄັ້ງໜຶ່ງ ເຄີຍຢູ່ໃນສະພາບທີ່ບໍ່ມີບາບ

**ພຣະຄຣິດໄດ້ກ່າວຫຍັງທີ່ເບິ່ງຄືວ່າໄດ້ຈັດຕຽມໄວ້ສຳລັບມານແລະເທວະດູລູກນ້ອງຂອງມັນ?**

“ເມື່ອນັ້ນພຣະອົງຈະຊົງກ່າວກັບບັນດາຜູ້ທີ່ຢູ່ເບື້ອງ ພຣະຫັດຊ້າຍຂອງພຣະອົງວ່າ ສູທັງຫລາຍຜູ້ຖືກປ້ອຍເວນ, ຈົ່ງຖອຍຫນີຈາກເຮົາເຂົ້າໄປໃນໄຟທີ່ໄຫມ້ຢູ່ເປັນນິດຊຶ່ງຊົງຈັດຕຽມໄວ້ສຳລັບ ພຍາມານກັບບໍຣິວານຂອງມັນ” (ມັດທາຍ 25:41)

## ການຕໍ່ສູ້ກັນຂອງຊາຕານແລະພຣະຄຣິດ

**ແມ່ນຫຍັງທີ່ເຮັດໃຫ້ມາຊາຕານຫລົງຜິດ ແລະເຮັດບາບ?**

“ຈິດໃຈຂອງເຈົ້າຜະຍອງຂຶ້ນເພາະຄວາມງາມຂອງເຈົ້າ ເຈົ້າກະທຳໃຫ້ສະຕິປັນຍາຂອງເຈົ້າເສື່ອມເສັຽລົງ ເພາະເຫັນແກ່ຄວາມງາມຂອງເຈົ້າ ເຮົາຄວ່າງເຈົ້າລົງທີ່ດິນແລ້ວ ເຮົາຕິແຜ່ເຈົ້າຕໍ່ຫນ້າກະສັດທັງຫລາຍ ເພື່ອຕາຂອງທ່ານທັງຫລາຍເຫລົ່ານັ້ນຈະເພີ່ນຢູ່ທີ່ເຈົ້າ” (ເອເຊກຽນ 28:17) “ເຈົ້າຣຳພຶງໃນໃຈຂອງເຈົ້າວ່າ ຂ້າຈະຂຶ້ນໄປຍັງຟ້າສວັນ ເຫນືອດວງດາວທັງຫລາຍຂອງພຣະເຈົ້າ ຂ້າຈະຕັ້ງພຣະທີ່ນັ່ງຂອງຂ້າໃນທີ່ສູງນັ້ນ ຂ້າຈະນັ່ງເທິງຊຸມເຂົາຊຸມນຸມສະຖານໃນທີ່ອຸດອນໄກ ຂ້າຈະຂຶ້ນໄປເຫນືອຄວາມສູງຂອງເມກ ຂ້າຈະກະທຳຕົວຂອງຂ້າເຫມືອນອົງຜູ້ສູງສຸດ” (ເອຊາຢາ 14:13,14)

**ໝາຍເຫດ**: ຄວາມຍິ່ງ ແລະຄວາມຢາກຍົກສູງຕົວເອງໄດ້ເຮັດໃຫຊາຕານຫລົງຜິດ ຢ່າງນີ້ເອງ ຈຶ່ງບໍ່ມີເຫດຜົນໃດໆທີ່ຈະແກ້ໂຕໄດ້ “ຄວາມເຍີ້ຍິ່ງເດີນຫນ້າການຖືກທຳລາຍ ແລະຈິດໃຈທີ່ຍະໂສນຳຫນ້າການລົ້ມ” (ສຸພາສິດ 16:18) ເພາະສະນັ້ນເຮົາອາດຮູ້ແລ້ວວ່າຄວາມບາບເລີ່ມຕົ້ນມາຈາກໃສ ອັນໃດເປັນສາເຫດ ແລະອັນໃດເປັນຜົນຂອງຄວາມຊົ່ວ ບໍ່ມີເຫດຜົນໃດໆທີ່ຈະສາມາດໃຊ້ແກ້ໂຕເພື່ອໃຫ້ພົ້ນຈາກບາບ. ຜູ້ໃດໜຶ່ງຈະພົ້ນບາບໄດ້ກໍຕໍ່ເມື່ອຜູ້ນັ້ນໄດ້ອະທິບາຍໃຫ້ຮູ້ວ່າຜູ້ນັ້ນບໍລິສຸດ ແລະເມື່ອເຂົາສາມາດພິສູດໄດ້ວ່າເຂົາບໍລິສຸດ ເຂົາກໍພົ້ນຈາກບາບ ຄວາມບາບທັງປວງແມ່ນຮູບແບບໜຶ່ງຂອງການເຫັນແກ່ໂຕ ແລະຜົນຂອງມັນກໍກົງກັນຂ້າມກັບຜົນຂອງຄວາມຮັກ ຜົນສຸດທ້າຍຂອງຄວາບກໍຄືການຖືກທອດທິ້ງແລະການຖືກເນລະເທດອັນຕະຫລອດໄປຈາກກາຍທັງປວງໃນຈັກກະວານທີ່ພຣະເຈົ້າສ້າງມາ ມີແຕ່ຄົນທີ່ໂງ່ແລະດື້ງດຶງເທົ່ານັ້ນທີ່ເຮັດບາບ ແລະເຂົາກໍຈະຖືກບາບທຳລາຍ ຄົນຊົ່ວທັງຫລາຍຈະຖືກທຳລາຍ (ມາລາກີ 4:1) ແລະຄົນຊອບທຳຈະຮຸ່ງເຮືອງ ເຫມືອນດວງດາວສວ່າງເທິງທ້ອງຟ້າ ແລະຜູ້ທີ່ສັ່ງສອນຄົນທັງຫລາຍໃຫ້ເປັນຜູ້ຊອບທັມ ຈະຮຸ່ງເຮືອງເຫມືອນດວງດາວຕລອດໄປ (ດານີເອນ 12:3)

**ເຊິ່ງກົງກັນຂ້າມກັບຄວາມຍິ່ງພະຫຍອງແລະຄວາມເຫັນແກ່ໂຕຂອງຊາຕານ ພຣະຄຣິດຊົງມີນ້ຳໃຈແບບໃດ?**

"ພຣະອົງຊົງສະພາບຂອງພຣະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນ ເປັນສິ່ງທີ່ຕ້ອງຍຶດ ຫວງໄວ້ ແຕ່ໄດ້ກັບຊົງຍອມສລະ ແລະຊົງຮັບສະພາບຂ້ອຍຂ້າ ຊົງຖືກຳເນີດເປັນມະນຸດ ແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ" (ຟີລິບປອຍ 2:6-8)

**ຫລັງຈາກມະນຸດໄດ້ເຮັດບາບ ພຣະເຈົ້າໄດ້ກະທຳການອັນໃດເພື່ອສະແດງໃຫ້ເຫັນເຖິງຄວາມຮັກ ແລະພຣະປະສົງທີ່ຈະໃຫ້ອະໄພເຂົາ?**

"ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ" (ໂຢຮັນ 3:16)

## ຄວາມໝາຍແລະທຳມະຊາດຂອງຄວາມບາບ

**ຄວາມບາບຄືຫຍັງ?**

"ທຸກຄົນທີ່ເຮັດບາບກໍເຮັດຜິດຕໍ່ພຣະບັນຍັດເຫມືອນກັນ ບາບເປັນສິ່ງທີ່ຜິດຕໍ່ພຣະບັນຍັດ" (1 ໂຢຮັນ 3:4)

**ແມ່ນຫຍັງນຳມາຊຶ່ງຄວາມບາບ?**

"ເມື່ອກິເລດຕັ້ງຮາກແລ້ວກໍໃຫ້ເກີດຄວາມຜິດບາບ ແລະເມື່ອຄວາມຜິດບາບຄົບຖ້ວນແລ້ວກໍໃຫ້ເກີດຄວາມຕາຍ" (ຢາໂກໂບ 1:15)

## ຜົນຂອງຄວາມບາບ

**ຜົນສຸດທ້າຍຂອງຄວາມບາບແມ່ນຫຍັງ?**

"... ແລະເມື່ອຄວາມຜິດບາບຄົບຖ້ວນແລ້ວກໍໃຫ້ເກີດຄວາມຕາຍ" (ຢາໂກໂບ 1:15) "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ..." (ໂຣມ 6:23)

**ຍ້ອນການລ່ວງລະເມີດຂອງອາດາມ ຄວາມຕາຍໄດ້ຖືກຕົກທອດມາເຖິງຈັກຄົນ?**

"ເຫດສັນນັ້ນຄວາມຜິດບາບໄດ້ເຂົ້າມາໃນໂລກເພາະດ້ວຍມະນຸດຄົນດຽວ ແລະຄວາມຕາຍກໍໄດ້ເກີດມາຍ້ອນຄວາມຜິດບາບນັ້ນ ຢ່າງນັ້ນແຫລະ, ຄວາມຕາຍຈຶ່ງໄດ້ລາມໄປເຖິງມະນຸດທຸກຄົນ ເພາະວ່າທຸກຄົນໄດ້ເຮັດບາບແລ້ວ" (ໂຣມ 5:12) "ດ້ວຍວ່າຄົນທັງປວງໄດ້ຕາຍເພາະກ່ຽວເນື່ອງກັບອາດາມ..." (1 ໂກຣິນໂທ 15:22)

**ດິນແລະພືດພັນໄດ້ຮັບຜົນກະທົບຫຍັງຈາກຄວາມບາບຂອງອາດາມ?**

"... ຂີ້ດິນຈະຖືກສາບແຊ່ງ ກ່ອນຈະໄດ້ອາຫານມາລ້ຽງຊີບ ເຈົ້າຈະຕ້ອງເຮັດວຽກຢ່າງຫນັກ ຂຸດດິນຟັນໄມ້ຈົນຫນ້າແຫລ້ຫນ້າກ່ຳເທົ່າສ້ຽງຊີວິດ ກົກໄມ້ແລະພືດຕ່າງໆທີ່ມີຫນາມຈະເກີດຂຶ້ນ..." (ປະຖົມມະການ 3:17,18)

**ຄຳສາບແຊ່ງອີກຢ່າງໜຶ່ງຊຶ່ງມີມາຍ້ອນອາຊະຍາກອນຜູ້ທຳອິດຄືຫຍັງ?**

"ພຣະຜູ້ເປັນເຈົ້າຊົງຖາມອີກວ່າ, "ກາອິນ ເປັນຫຍັງເຈົ້າຈຶ່ງທຳເຣື່ອງໂຫດຮ້າຍເຊັ່ນນີ້? ນ້ອງຊາຍເຈົ້ານອນເລືອດອາບຕົວຢູ່ໃນທົ່ງນາ ...ເຈົ້າຈະຖືກດ່າ ຖືກສາບແຊ່ງ ແລະຖືກເນຣະເທດອອກຈາກທົ່ງນາບ່ອນຊຶ່ງດູດກິນເລືອດຂອງນ້ອງຊາຍຊຶ່ງເຈົ້າໄດ້ຂ້າ ຖ້າເຈົ້າເຮັດໄຮ່ທຳນາດິນນັ້ນຈະບໍ່ນຳຄວາມອຸດົມສົມບູນມາໃຫ້ ..." (ປະຖົມມະການ 4:10-12)

**ເຫດການຮ້າຍແຮງອັນໃດທີ່ໄດ້ເກີດຂຶ້ນຍ້ອນການສືບຕໍ່ເຮັດບາບຜິດຕໍ່ພຣະເຈົ້າ?**

"ດ້ວຍເຫດນີ້ ພຣະອົງຈຶ່ງກ່າວວ່າ, ເຮົາຈະທຳລາຍມະນຸດທຸກໆຄົນທີ່ເຮົາໄດ້ສ້າງຂຶ້ນແລ້ວໃນທຸກຫົນທຸກແຫ່ງ ເຮົາຈະທຳລາຍຝູງສັດ ແລະຝູງນົກຕ່າງໆ ເພາະວ່າເຮົາເສັຽໃຈທີ່ໄດ້ສ້າງມັນມາ ຄັນຕໍ່ມາ ພຣະເຈົ້າຊົງກ່າວກັບໂນອາວ່າ, ເຮົາໄດ້ຕັດສິນໃຈຈະທຳລາຍມະນຸດສະໂລກແລ້ວ ເຮົາຈະທຳລາຍພວກເຂົາຈົນຫມົດສິ້ນ ເພາະວ່າໂລກນີ້ເຕັມໄປດ້ວຍການຊົ່ວຮ້າຍຂອງເຂົາ ຄາວນ້ຳຖ້ວມໂລກຢູ່ນັ້ນ ໂນອາມີອາຍຸຫົກຮ້ອຍປີ ໃນວັນທີ່ສິບເຈັດເດືອນທີ່ສອງ ເມື່ອໂນອາມີອາຍຸຫົກຮ້ອຍປີ ຟ້າກໍມືດຄຶ້ມແລ້ວຖອກເທຫ່າຝົນລົງມາສູ່ໂລກ ນ້ຳໃນບໍ່ ໃນເຫວແລະຫ້ວຍຮ່ອງກໍພຸ່ງຂຶ້ນ" (ປະຖົມມະການ 6:7, 13; 7:6,11)

**ຫລັງຈາກນ້ຳຖ້ວມໂລກ**
**ແມ່ນຫຍັງໄດ້ເກີດຂຶ້ນທີ່ເປັນຜົນມາຈາກການທີ່ມະນຸດໄດ້ປະຖິ້ມຄວາມເຊື່ອໃນພຣະເຈົ້າ?**

"ແລ້ວພຣະອົງຈຶ່ງສະເດັດລົງມາທອດພຣະເນດເມືອງແລະຫໍຄອຍສູງທີ່ມະນຸດໄດ້ສ້າງຂຶ້ນ ພຣະອົງຊົງກ່າວວ່າ, ບັດນີ້ ມະນຸດທ້ອນໂຮມກັນເປັນອັນນຶ່ງອັນດຽວ ເຂົາເວົ້າພາສາດຽວກັນ ນີ້ກໍເປັນພຽງຂັ້ນເລີ້ມຕົ້ນທີ່ເຂົາໄດ້ກະທຳມາ ໃນຂັ້ນຕໍ່ໄປ ພວກເຂົາກໍຈະສາມາດທຳທຸກສິ່ງທຸກຢ່າງທີ່ເຂົາປາຖນາຢາກທຳ ສະນັ້ນເຮົາຕ້ອງລົງໄປທຳໃຫ້ພາສາຂອງເຂົາແຕກຕ່າງກັນ ເພື່ອພວກເຂົາຈະເວົ້າບໍ່ເຂົ້າໃຈກັນອີກ ແລ້ວພຣະຜູ້ເປັນເຈົ້າຊົງທຳໃຫ້ພວກເຂົາພັດພາກຈາກກັນໄປຢູ່ທົ່ວທຸກແຫ່ງໃນໂລກ ພວກເຂົາຈຶ່ງເຊົາສ້າງເມືອງນັ້ນ" (ປະຖົມມະການ 11:5-8)

**ສິ່ງທັງປວງທີ່ຖືກສ້າງມາໄດ້ຕົກຢູ່ໃນສະພາບອັນໃດ?**

"ເຮົາທັງຫລາຍຮູ້ຢູ່ວ່າສັພສິ່ງທີ່ຊົງສ້າງມານັ້ນ ກໍກຳລັງໂອ່ຍຄາງແລະເປັນທຸກເຈັບປວດດ້ວຍກັນມາຈົນທຸກວັນນີ້" (ໂຣມ 8:22)

## ການທີ່ພຣະເຈົ້າລ່າຊ້າທີ່ຈະທຳລາຍບາບ

**ແມ່ນຫຍັງທີ່ບົ່ງບອກວ່າພຣະເຈົ້າໄດ້ລ່າຊ້າໃນການຈັດການກັບຄວາມບາບ?**

"ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເຣື່ອງພຣະສັນຍາຂອງພຣະອົງ ເຫມືອນດັ່ງບາງຄົນ ຄຶດວ່າຊ້າ ແຕ່ພຣະອົງຊົງອົດກັ້ນພຣະທັຍໄວ້ດົນນານເພາະເຫັນແກ່ທ່ານທັງຫລາຍ ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັຽ ແຕ່ຊົງປາຖນາທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈເກົ່າເອົາໃຈໃຫມ່" (1 ເປໂຕ 3:9)

**ພຣະເຈົ້າຊົງມີທັດສະນະແນວໃດກ່ຽວກັບຄົນບາບ?**

"ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປອີກວ່າ, ເຮົາບໍ່ຢາກໃຫ້ຄົນນຶ່ງຄົນໃດຕາຍ ສະນັ້ນ ຈົ່ງເຊົາເຮັດບາບ ແລະມີຊີວິດຢູ່ເທີນ" (ເອເຊກຽນ 18:32)

**ມະນຸດສາມາດຊ່ອຍໂຕເອງໃຫ້ພົ້ນຈາກບາບໄດ້ບໍ່?**

"ຄົນເອທີໂອເປັຽປ່ຽນວັນນະຂອງຕົນເອງໄດ້ຫລື ຫລືເສືອດາວປ່ຽນລາຍຂອງມັນ ຖ້າໄດ້ແລ້ວເຈົ້າທັງຫລາຍຜູ້ທີ່ເຄີຍຕໍ່ການກະທຳຄວາມຊົ່ວຈະມາກະທຳຄວາມດີກໍໄດ້ " (ເຢເຣມີຢາ 13:23)

**ໃຈປາດຖະໜາມະນຸດມີສ່ວນຮ່ວມຫຍັງໃນການຕັດສິນວ່າໃຜຈະໄດ້ຊີວິດ?**

"ຝ່າຍພຣະວິນຍານແລະເຈົ້າສາວຊົງກ່າວວ່າ, ເຊີນມາ ໃຫ້ຜູ້ໄດ້ຍິນນັ້ນທູນວ່າ, ເຊີນມາ ໃຫ້ຜູ້ຫິວນ້ຳເຂົ້າມາ ຜູ້ໃດມີໃຈປາຖນາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບຊີວິດໂດຍບໍ່ຕ້ອງເສັຽຄ່າ" (ພຣະນິມິດ 22:17)

## ພຣະຄຣິດ, ຄົນບາບ, ຊາຕານ

**ພຣະຄຣິດໄດ້ທົນທຸກຫຍັງເພື່ອຄົນບາບ?**

"ແຕ່ເຂົາຖືກບາດເຈັບຍ້ອນບາບຂອງພວກເຮົາທັງຫລາຍ ເຂົາຖືກຕີຍ້ອນພວກເຮົາທຳຊົ່ວ ການລົງໂທດທີ່ເຂົາໄດ້ຮັບນັ້ນທຳໃຫ້ພວກເຮົາເປັນອິສຣະສົມບູນ ທີ່ເຂົາຖືກຕີນັ້ນກໍເພື່ອໃຫ້ເຮົາຫາຍດີ" (ເອຊາຢາ 53:5)

**ພຣະຄຣິດໄດ້ຊົງປາກົດເພື່ອຫຍັງ?**

"ເຈົ້າທັງຫລາຍຮູ້ແລ້ວວ່າພຣະຄຣິດໄດ້ຊົງປາກົດເພື່ອຍົກເອົາຜິດບາບໄປເສັຽ ...ຜູ້ທີ່ເຮັດບາບຕາມເຄີຍກໍມາຈາກມານ ເພາະວ່າມານໄດ້ເຮັດບາບຕັ້ງແຕ່ຕົ້ນເດີມມາ ພຣະບຸດຂອງພຣະເຈົ້າໄດ້ສະເດັດມາປາກົດກໍເພາະເຫດນີ້ແຫລະ ຄືເພື່ອຊົງທຳລາຍກິຈການຂອງມານເສັຽ" (1 ໂຢຮັນ 3:5,8)

**ຈຸດປະສົງໂດຍກົງອັນດຽວຂອງການມາປະນູດຂອງພຣະຄຣິດແມ່ນຫຍັງ?**

“ເຫດສັນນັ້ນ, ເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພຣະອົງຈຶ່ງໄດ້ຊົງຮ່ວມຊາດມະນຸດເຫມືອນກັນ ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍຄືພຍາມານ” (ເຮັບເຣີ 2:14)

## ຈຸດຈົບຂອງຄວາມບາບ ແລະຄວາມໂສກເສົ້າ

**ສຽງປະສານແຫ່ງໄຊຊະນະອັນໃດທີ່ເປັນເຄື່ອງໝາຍຂອງການສິ້ນສຸດຂອງຄວາມບາບ?**

“ແລະຂ້າພະເຈົ້າໄດ້ຍິນສຽງສິ່ງທີ່ມີຊີວິດທັງຫມົດ ທັງໃນສວັນ ເທິງແຜ່ນດິນໂລກ ໃຕ້ແຜ່ນດິນ ແລະໃນມະຫາສະຫມຸດ ຄືສິ່ງທັງປວງຊຶ່ງຢູ່ໃນທີ່ນັ້ນຮ້ອງວ່າ, ຂໍໃຫ້ຄຳສັຣເສີນ ກຽດຕິຍົດ ສະງ່າຣາສີ ແລະຣິດທານຸພາບ ຈົ່ງມີແດ່ພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງ ແລະແດ່ພຣະເມສານ້ອຍຕລອດໄປເປັນນິດ” (ພຣະນິມິດ 5:13)

**ເມື່ອໃດແລະດ້ວຍເຫດການໃດ ຜົນຂອງຄວາມບາບຈະຖືກທຳລາຍ?**

“ວັນຂອງອົງພຣະຜູ້ເປັນເຈົ້າຈະມາເຖິງເຫມືອນດັ່ງຂະໂມຍມາ ໃນວັນນັ້ນທ້ອງຟ້າຈະລ່ວງເສັຽໄປດ້ວຍສຽງດັງກ້ອງສນັ່ນ ໂລກ ທາດຈະສລາຍໄປດ້ວຍໄຟ ແລະແຜ່ນດິນໂລກກັບສາຣະພັດທຸກສິ່ງຈະໄຫມ້ເສັຽຫມົດ” (2 ເປໂຕ 3:10)

**ຜົນຂອງຄວາມບາບຈະຖືກທຳລາຍຢ່າງໝົດກ້ຽງຂະໜາດໃດ?**

“ພຣະເຈົ້າຈະຊົງເຊັດນ້ຳຕາທຸກໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ” (ພຣະນິມິດ 21:4) “ຈະບໍ່ມີສິ່ງໃດຖືກຊົງປ້ອຍດ່າອີກຕໍ່ໄປ ແຕ່ພຣະຣາຊບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍຈະຕັ້ງຢູ່ທີ່ນັ້ນ ແລະບັນດາຂ້ອຍໃຊ້ຂອງພຣະອົງຈະບົວລະບັດພຣະອົງ” (ພຣະນິມິດ 22:3)

**ແລ້ວຄວາມບາບແລະຜົນອັນຊົ່ວຮ້າຍຂອງມັນຈະມີມາອີກບໍ່?**

“... ຄວາມຕາຍຈະບໍ່ມີອີກຕໍ່ໄປ ...” (ພຣະນິມິດ 21:4) “ຈະບໍ່ມີສິ່ງໃດຖືກຊົງປ້ອຍດ່າອີກຕໍ່ໄປ ...” (ພຣະນິມິດ 22:3)